# ໂຄງການສິລະປະການສະແດງ ແລະ ສິລະປະກັມ

ເປົ້າໝາຍຂອງຫ້ອງການສິລະປະກັມ ແລະ ສິລະປະການສະແດງ (VAPA): "ເພື່ອໃຫ້ຮຽນວິຊາທີ່ມີຄຸນນະພາບກ້າວໜ້າກັນ, ໃນພື້ນຖານຂັ້ນມາດຖານການສິດສອນສິລະປະວິຊາເຕັ້ນລຳ, ດົນຕຣີ, ຫລິ້ນລະຄອນ ແລະ ສິລະປະກັມໃນທຸກໆໂຮງຮຽນຂອງສູນກາງສຶກສາ ໂດຍຄູທີ່ມີຄວາມສາມາດ ແລະ ມີຄຸນນະວຸທິພຽງພໍ."

## ຂໍ້ສລູບ

ສົກຮຽນປີ 2004–05, ໂຄງການສິລະປະກັມ ແລະ ສິລະປະການສະແດງ (VAPA) ໄດ້ບໍຣິການ:

- ❖ ໂຄງການສິລະປະກັມ ແລະ ສິລະປະການສະແດງຂອງສູນກາງສຶກສາມີຄູປະມານ 165 ຄົນ, ບໍ່ລວມ ໂຮງຮຽນແມກແນັດ (magnet);
- ❖ ມີຫ້າໂຮງຮຽນແມກແນດ: ປະກອບ Oak Park, Valencia Park, ແລະ Zamorano; ພາສາກາງວິຊາປະດິດຄິດສ້າງແລະຖ່າຍວີດີໂອ ສິລະປະການສະແດງ; ແລະ ໂຮງຮຽນປະດິດຄິດສ້າງ ແລະ ສິລະປະການສະແດງ; ແລະ
- ❖ ຫ້ອງການຂອງໂຄງການມີຄູປະກອບ 27 ຄົນບໍຣິການຊ່ວຍເຫລືອໂຮງຮຽນ 112 ແຫ່ງ.

ສະພາສູນກາງສຶກສາໄດ້ນຳເອົາຂັ້ນມາດຖານຂອງຣັຖໃນວິຊາສິລະປະການສິລະປະກັມ ແລະ ສິລະປະການສະແດງໂດຍເປັນທາງການເມື່ອເດືອນມັງກອນ 2001. ວິຊາສິລະປະກັມ, ການເຕັ້ນລຳ, ດົນຕຣີ ແລະ ລະຄອນແມ່ນເປັນສ່ວນສຳຄັນໃນການສຶກສາຂອງນັກຮຽນທຸກໆຄົນ, ແລະສູນກາງສຶກສາແຊນດິເອໂກ (SDCS) ເປັນບ່ອນອຸດົມສົມບູນເຕັມໄປດ້ວຍໂຄງການປຽນແປງໃໝ່ໆ ແລະພ້ອມດ້ວຍສິລະປະນານາຊະນິດ. ຫ້ອງການສິລະປະການສະແດງ ແລະ ສິລະປະກັມນີ້ຮວມມີ:

- ຫ້ອງການສິລະປະກັມ ແລະ ສິລະປະການສະແດງ (VAPA) ໂດຍຮັບການສນັບສນູນຈາກເນື້ອໃນຂັ້ນມາດຖານຂອງຣັຖ ຊຶ່ງຊ່ວຍເຫລືອສ່ວນບຸກຄົນໂດຍກົງແກ່ຄູສອນ, ພະນັກງານປົກຄອງ, ສິລະປິນຈາກຊຸມຊົນ ແລະ ສະມາຄົມສິລະປິນ.
- ໃນປີນີ້ຫ້ອງການ VAPA ໄດ້ສຳເຣັດໂຄງການຮຽນວິຊາແກ່ນສານ ແລະ ໄດ້ສເນີເອກະສານນີ້ແກ່ສູນກາງສຶກສາ. ເອກະສານອັນນີ້ສາມາດປຽບທຽບກັບຫລັກສູດການຮຽນສຳຄັນໃນຂະແໜງອື່ນໆ ແລະສຳຫລັບໃຫ້ນັກຊ່ຽວຊານ, ນາຍຄູ, ນັກຮຽນ, ພະນັກງານປົກຄອງ ແລະ ສະມາຄົມສິລະປິນ ໃຊ້ໃນເວລາປະດິດຄິດສ້າງໂຄງການສອນສິລະປະຢູ່ໃນໂຮງຮຽນ.
- ໂຄງການ VAPA ຊຸກຍູ້ສນັບສນູນການອົບຮົມພະນັກງານຫລາຍໆແບບ ໃຫ້ພະນັກງານສູນກາງສຶກສາ ແລະ ນາຍຄູທົ່ວເຂດສູນກາງສຶກສາ, ຮວມທັງການອົບຮົມການອົບຮົມຄູ, ປະຊຸມປະຈຳເດືອນ, ການຝຶກອົບຮົມສະເພາະ–ການຮັກສາລະບຽບວິນັຍ ແລະ ການຊ່ວຍເຫລືອປະຈຳໂຮງຮຽນ.
- ໂຄງການປັບປຸງສິລະປະຂອງເດັກປັດຈຸບັນ (I CAN) ໄດ້ຈັດຕັ້ງຂຶ້ນໂດຍ ຫ້ອງການ VAPA) ໃນປີ 2000. ນັກວິຊາການສອງ–ດ້ານນີ້ໄດ້ສ້າງຕົວຢ່າງອັນດີໃຫ້ນັກສິລະປິນ ແລະ ຄູປະຈຳຫ້ອງ ນຳເອົາການສິດສອນເຕັ້ນລຳ, ດົນຕຣີ, ລະຄອນ ແລະ ສິລະປະກັມເຂົ້າໃນຫ້ອງຮຽນ ໂດຍໄດ້ເຮັດວຽກຮ່ວມກັບຄູຫ້ອງອະນຸບານ–ເຖິງປີທີ 3 ໃນດ້ານການວາງແຜນ ແລະ ຕົວຢ່າງບົດຮຽນສິລະປະ.
- ມີການຈັດຕັ້ງ ແລະ ທຸຣະກິດ ຫລາຍກວ່າ 30 ແຫ່ງເຂົ້າເປັນຄູ່ເຮັດວຽກຮ່ວມໂຮງຮຽນ ແລະ ຫ້ອງການ VAPA ເພື່ອຊຸກຍູ້ຊ່ວຍເຫລືອການສຶກສາສິລະປະຢູ່ໃນຫ້ອງຮຽນຂອງສູນກາງສຶກສາ.
- ການສເລີມສລອງສະແດງສິລະປະປະຈຳປີຂອງຜູ້ບໍຣິຫານການສຶກສາ ແລະ ການຈັດຕັ້ງຂອງນັກຮຽນທົ່ວເຂດສູນກາງສຶກສາທີ່ນຳມາສະແດງຢູ່ທີ່ສູນກາງສຶກສາມີທັງໝົດປະມານ 500 ອັນ.
- ພວກນັກຮຽນປີທີຫ້າທຸກໆຄົນໄດ້ເຂົ້າຮ່ວມໃນການຮຽນສິລະປະ ແລະ ວັທນະທັມ ຊຶ່ງເປັນສ່ວນນຶ່ງຂອງໂຄງການອາທິດບາບົວພາກ.
- ນອກຈາກນີ້ຍັງມີໂຮງຮຽນດົນຕຣີ, ວົງດົນຕຣີໃຫຍ່, ການວາງສະແດງສິລະປະ, ການຖ່າຍທຳລະຄອນ ແລະ ວົງເຕັ້ນລຳຕລອດປີ, VAPA ຍັງໄດ້ຈັດສເລີມສລອງລາຍການດົນຕຣີໃຫຍ່ສຳຫລັບນັກຮຽນທີ່ມີຄວາມສາມາດພິເສດ ດ້ານການຮ້ອງລູກຄູ່, ວົງດົນຕຣີ, ດົນຕຣີສາຍ ແລະ ຮ້ອງຕາມດົນຕຣີຈາກເທບ ໃນໂຮງຮຽນປະຖົມ ແລະ ມັທຍົມ. ການສະແດງດົນຕຣີນີ້ໄດ້ອຸປຖັມໂດຍຜູ້ບໍຣິຈາກທັງຫລາຍ.
- ສູນກາງສຶກສາແຊນດິເອໂກ (SDCS) ແມ່ນສະມາຊິກ ຂອງຄູ່ຮ່ວມວຽກການສຶກສາສິລະປະແຊນດິເອໂກ (SDAEP), ທີ່ເປັນຕົວແທນຈາກສິລະປະຊຸມຊົນ ແລະການຈັດຕັ້ງດ້ານວັທນະທັມ, ອົງການຊ່ວຍເຫລືອຂອງຣັຖ ແລະ ທຸຣະກິດຕ່າງໆທີ່ໃຫ້ການຊ່ວຍເຫລືອດ້ານສິລະປະແກ່ນັກຮຽນຊັ້ນອະນຸບານເຖິງຊັ້ນປີທີ 12 ໃນເຂດໂຮງຮຽນແຊນດິເອໂກ.
- ໃນເດືອນພຶສພາ 2002, ຄູ່ຮ່ວມການສຶກສາສິລະປະແຊນດິເອໂກ (SDAEP), ໄດ້ຈັດງານຫາລາຍໄດ້ຄັ້ງທຳອິດ, **ຂໍ່ສັນຣະເສີນ**, ເພື່ອຊ່ວຍເຫລືອພວກນັກຮຽນເຂດສຶກສາແຊນດິເອໂກ. ລາຍການພິເສດຂອງພວກນັກຮຽນມີພອນສວັນທາງສິລະປະ ແລະ ການຫາລາຍໄດ້ສົບທົບທຶນນີ້ ໄດ້ຈັດຂຶ້ນໂດຍການຈັດຕັ້ງສິລະປະເຂດທ້ອງຖິ່ນ.

ຕິດຕໍ່ລາຍລະອຽດທີ່: Visual and Performing Arts Department: (858) 539-5349
Media inquiries: (619) 725-5578
www. sandi.net/vapa

"ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 136,000 ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລິຟໍເນັຍ, ມີໂຮງຮຽນຫລາຍກວ່າ 202 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນທີ່ທຽບເທົ່າຕຳແໜ່ງເຮັດວຽກເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 15,800 ຄົນ.) ສູນກາງສຶກສາແຊນດິເອໂກ ໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍນະໂຍບາຍການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ, ແລະ ວິຊາເລກໃນໂຮງຮຽນກຸ່ມອະນຸບານ ເຖິງປີທີ 12. ສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນ ໂດຍນະໂຍບາຍການປັບປຸງຕຶກອາຄານຂອງໂຮງຮຽນ ແລະ ອັດຖຸການຮຽນໃຫ້ທັນສມັຍ ແລະ ດຳເນີນການສຶກສານະໂຍບາຍການພົວພັນພໍ່ແມ່, ຄູອາຈານ, ແລະ ຊຸມຊົນ."

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ
ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.

*XK., 05/12/05, Fact Sheet, Visual and Performing Arts Program, Spring 2005--Lao Version*